ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ :..14..../ຈຂ.ຊກ.

ເຊກອງ, ວັນທີ :..25../08./..2016

# ຄໍາສັ່ງ

ວ່າດ້ວຍເພີ່ມທະວີຄວາມເຂັ້ມງວດໃນການກວດກາການນໍາເຂົ້າ, ການຊື້-ຂາຍ, ການມີໄວ້ຄອບຄອງອຸປະກອນເຄື່ອງມື ແລະ ການນໍາໃຊ້ເຄື່ອງຈັກຕັດໄມ້ປະເພດຈັກສະຕິນ

ເຖິງ: - ທ່ານ ຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ແຂວງ
- ທ່ານ ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ
- ທ່ານ ຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ
- ທ່ານ ຫົວໜ້າກອງບັນຊາການທະຫານແຂວງ
- ທ່ານ ຫົວໜ້າກອງບັນຊາການ ປກສ ແຂວງ
- ທ່ານ ເຈົ້າເມືອງ 4 ຕົວເມືອງ.

- **ອີງຕາມ:** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015. ພາກທີ III, ໝວດທີ 4, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- **ອີງຕາມ:** ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ , ລົງວັນທີ 13 ພຶດສະພາ 2016.
- **ອີງຕາມ:** ການຕົກລົງເຫັນດີເປັນເອກະພາບ ໃນກອງປະຊຸມຄະນະປະຈໍາພັກແຂວງ ຄັ້ງວັນທີ 29/06/2016.

ເພື່ອປົກປັກຮັກສາ ແລະ ຟື້ນຟູຊັບພະຍາກອນທໍາມະຊາດໃຫ້ມີຄວາມອຸດົມສົມບູນ ໂດຍສະເພາະແມ່ນຊັບພະຍາກອນປ່າໄມ້ຊຶ່ງເປັນປັດໃຈພື້ນຖານສໍາຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ກໍ່ຄືຂອງທ້ອງຖິ່ນ ແລະ ການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າໃນປັດຈຸບັນ ແລະ ໃນອານາຄົດ; ທັງເປັນການຄຸ້ມຄອງ, ຈໍາກັດ ແລະ ສະກັດກັ້ນການນໍາເຂົ້າ, ການຊື້-ຂາຍ, ການນໍາໃຊ້ອຸປະກອນເຄື່ອງມື-ເຄື່ອງຈັກຕັດໄມ້ປະເພດຕ່າງໆ ໃຫ້ຮັດກຸມກວ່າເກົ່າ. ໃນໄລຍະຜ່ານມາເຖິງວ່າວຽກງານກວດກາ ແລະ ຄຸ້ມຄອງປ່າໄມ້ຈະເຮັດໄດ້ດີ ແຕ່ກໍ່ປາສະຈາກບໍ່ໄດ້ບັນຫາຄວາມສັບສົນ, ບໍ່ມີການປະສານກົມກຽວກັນລະຫວ່າງພາກສ່ວນກ່ຽວຂ້ອງ; ການຂຸດຄົ້ນໄມ້ໃນເຂດປ່າຜະລິດສ່ວນຫຼາຍ ບໍ່ປະຕິບັດຕາມການຈັດສັນ, ການສໍາຫຼວດບໍ່ໄປຕາມຫຼັກວິຊາການ, ຂາດຄວາມເຂັ້ມງວດໃນການປະຕິບັດບັນດານິຕິກໍາຕ່າງໆ ເປັນຊ່ອງຫວ່າງໃນການສວຍໂອກາດດ້ວຍຮູບການຕ່າງໆ, ຊຶ່ງເຮັດໃຫ້ລັດ ກໍ່ຄືປະເທດຊາດເສຍຜົນປະໂຫຍດ.

ດັ່ງນັ້ນ, ເພື່ອສືບຕໍ່ຟື້ນຟູ, ປົກປັກຮັກສາ ແລະ ຄຸ້ມຄອງທໍາມະຊາດປ່າໄມ້ໃຫ້ມີຄວາມສົມດຸນ ແລະ ຍືນຍົງຕາມນະໂຍບາຍຂອງລັດຖະບານ ກໍ່ຄືເຮັດໃຫ້ເນື້ອທີ່ປ່າໄມ້ໃນພື້ນທີ່ຕ່າງໆຂອງແຂວງ ບໍ່ໃຫ້ຖືກທໍາລາຍຕື່ມອີກ ແລະ ເພື່ອຮັບປະກັນໃຫ້ການປະຕິບັດຍຸດທະສາດ ໄດ້ບັນລຸຄາດໝາຍ ແຕ່ນີ້ຮອດປີ 2020 ໃຫ້ເນື້ອທີ່ປ່າໄມ້ປົກຫຸ້ມກວມເອົາ 70% ຂອງເນື້ອທີ່ທົ່ວປະເທດ.

## ເຈົ້າແຂວງອອກຄຳສັ່ງ :

**1.** ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ເຈົ້າເມືອງ 4 ຕົວເມືອງ ເພີ່ມທະວີຄວາມເປັນເຈົ້າການໃນການກວດກາ, ທ້ອນໂຮມ ເຄື່ອງຈັກຕັດໄມ້ປະເພດຈັກສະຕິນ ທີ່ມີໄວ້ໃນຄອບຄອງຢູ່ຕາມໂຮງງານ, ໂຮງເລື່ອຍ, ຢູ່ຕາມບ້ານ ແລະ ຄອບຄົວ-ຄົວເຮືອນ ແມ່ນທ້ອນໂຮມລວມສູນ ເພື່ອປັບປຸງໃຫ້ເຂົ້າສູ່ລະບຽບກົດໝາຍ ແລະ ບໍ່ອະນຸຍາດໃຫ້ນຳເຂົ້າ, ວາງຈຳໜ່າຍຊື້-ຂາຍ ຈັກສະຕິນ ແລະ ເຄື່ອງປະກອບການຕັດໄມ້ໃນທຸກກໍລະນີ. ຖ້າຫາກກວດພົບເຫັນບຸກຄົນ, ນິຕິບຸກຄົນນຳໃຊ້ ຫຼື ນຳເຂົ້າ ມາຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ແມ່ນຈະໄດ້ດຳເນີນຄະດີຕາມລະບຽບກົດໝາຍ.

**2.** ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ເຈົ້າເມືອງ 4 ຕົວເມືອງ ເປັນເຈົ້າການສົມທົບກັບສອງກຳລັງ ປກສ-ປກຊ ແຂວງ, ເມືອງ ແລະ ພາກສ່ວນກ່ຽວຂ້ອງ ເພີ່ມທະວີຢ່າງເຂັ້ມງວດໃນການຄຸ້ມຄອງ, ກວດກາເວນຍາມ, ຕິດຕາມເຝົ້າລະວັງ ແລະ ສະກັດກັ້ນການລັກລອບຂຸດຄົ້ນໄມ້ໂດຍສະເພາະໃນເຂດປ່າປ້ອງກັນ, ປ່າສະຫງວນແຫ່ງຊາດ ແລະ ປ່າປ້ອງກັນຂອງແຂວງ-ເມືອງ. ໃນທຸກກໍລະນີຫາກກວດກາພົບເຫັນພາຫານະ-ອຸປະກອນ ທີ່ອຳນວຍຄວາມສະດວກ ໃຫ້ແກ່ການລັກລອບຂຸດຄົ້ນໄມ້ເປັນຕົ້ນ: ລົດໄຖນາທີ່ຕົບແຕ່ງ, ລົດຊິ້ງ, ລົດສະແລວ, ຈັກສະຕິນ ແລະ ອື່ນໆ ແມ່ນໃຫ້ນຳໃຊ້ມາດຕະການກັກ, ຢຶດ, ທ້ອນໂຮມໃນທັນທີ ແລ້ວດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

**3.** ພະແນກກະສິກຳ-ປ່າໄມ້ ແລະ ເຈົ້າເມືອງ 4 ຕົວເມືອງ ເປັນໃຈກາງປະສານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງຜັນຂະຫຍາຍໃຫ້ທົ່ວເຖິງທຸກເປົ້າໝາຍໃນທົ່ວແຂວງ, ເມືອງ. ພ້ອມທັງໃຫ້ຄວາມຮ່ວມໄມ້ຮ່ວມມືໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ມີຜົນສຳເລັດດ້ວຍດີ. ແລ້ວສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ຂັ້ນເທິງຮັບຊາບຕາມເວລາອັນຄວນ.

**4.** ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ .

**ເຈົ້າແຂວງ**

ຄຳເພີຍ ບຸດດາວຽງ

*** ບ່ອນສົ່ງ :**

- ບັນດາພະແນກການອ້ອມຂ້າງ 1 ສະບັບ.
- ສອງກຳລັງປະກອບອາວຸດ 1 ສະບັບ.
- ຫ້ອງການຫ້ອງເທົ່າຂັ້ນແຂວງ 1 ສະບັບ.
- ເມືອງ 4 ຕົວເມືອງ 1 ສະບັບ.
- ສຳເນົາ 1 ສະບັບ.